ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫົວພັນ

ເລກທີ..1380/ຈຂ.ຫພ

ຫົວພັນ, ວັນທີ..14../..11../2019

ຂໍ້ຕົກລົງ

ວ່າດ້ວຍການຄຸ້ມຄອງການຈັດງານແຕ່ງດອງ, ງານບາສີສູ່ຂ້ວນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ ຢູ່ແຂວງຫົວພັນ

- ອີງຕາມກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ;

- ອີງຕາມດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 78/ລບ, ລົງວັນທີ 10 ມີນາ 2015;

- ອີງຕາມມະຕິຕົກລົງຂອງກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງຫົວພັນ ຊຸດທີ I ສະບັບເລກທີ 339/ສພຂ, ລົງວັນທີ 26 ກໍລະກົດ 2019.

ພາກທີ I

ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການໃນການຄຸ້ມຄອງງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆຢູ່ພາຍໃນແຂວງຫົວພັນ, ແນໃສ່ເຮັດໃຫ້ການໃຊ້ຈ່າຍແບບປະຢັດມັດທະຍັດ, ຕ້ານການຟຸມເຟືອຍ ຮັບປະກັນທາງດ້ານຊີວິດ, ສຸຂະພາບ, ປົກປັກຮັກສາຮີດຄອງປະເພນີອັນດີງາມທີ່ເປັນມູນເຊື້ອຂອງຊາດ, ບັນດາເຜົ່າ, ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນທ້ອງຖິ່ນແຂວງຫົວພັນ; ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ.

ມາດຕາ 2 ການຄຸ້ມຄອງການຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ

ການຄຸ້ມຄອງການຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆແມ່ນການກຳນົດຮູບແບບ, ວິທີການ ແລະ ມາດຕະການໃນການຈັດງານປະເພດຕ່າງໆ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ, ຮັບປະກັບການປະຢັດມັດທະຍັດ ແລະ ຕ້ານການຟຸມເຟືອຍ.

ມາດຕາ 3 ອະທິບາຍຄຳສັບ

1. ງານແຕ່ງດອງ ໝາຍເຖິງ ພິທີການຢັ້ງຢືນໃນການສ້າງຄອບຄົວໃໝ່ ເພື່ອໃຫ້ການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ຮັບຮູ້ວ່າ ຄູ່ບ່າວສາວ ໄດ້ເປັນຄູ່ຜົວເມຍກັນ ໂດຍຖືກຕ້ອງຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີ;

2. ງານບາສີສູ່ຂວັນ ໝາຍເຖິງ ພິທີສູ່ຂວັນ, ຜູກແຂນ ແລະ ໃຫ້ພອນເຊິ່ງກັນ ແລະ ກັນ ທີ່ຈັດຂຶ້ນໂດຍ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆ ເພື່ອຄວາມເປັນສິລິມຸງຄຸນ ແລະ ເປັນການຮັບໂຊກໄຊ;

3. ງານລ້ຽງ ໝາຍເຖິງ ງານທີ່ຈັດຂຶ້ນເພື່ອເປັນການພົບປະສ້າງສັນ, ຮັບປະທານອາຫານ, ການດື່ມເນື່ອງ ໃນໂອກາດວັນສຳຄັນຕ່າງໆ;

4. ງານບຸນປະເພນີ ໝາຍເຖິງ ງານເທດສະການ, ງານບຸນຮີດຄອງປະເພນີຕ່າງໆທີ່ເຄີຍນັບຖື ແລະ ປະຕິ ບັດສືບທອດກັນຕໍ່ໆກັນມາຂອງປະຊາຊົນບັນດາເຜົ່າ;

5. ການຄຸ້ມຄອງ ໝາຍເຖິງ ການກຳນົດເອົາຮູບແບບລະບຽບການໃດໜຶ່ງເພື່ອຈັດຕັ້ງປະຕິບັດໃຫ້ສອດ ຄ່ອງກັບແນວທາງນະໂຍບາຍທີ່ວາງອອກເພື່ອຈຸດປະສົງໃດໜຶ່ງ;

6. ຜູ້ບໍລິໂພກ ໝາຍເຖິງ ຜູ້ຊົມໃຊ້, ຜູ້ກິນ ແລະ ຜູ້ໃຊ້ຈ່າຍຕ່າງໆ;

7. ອຸປະໂພກ ໝາຍເຖິງເຄື່ອງໃຊ້ໃຫ້ເກີດປະໂຫຍດ;

8. Plastic (ປຼາຊະຕິກ) ໝາຍເຖິງ ວັດຖຸທີ່ເປັນຢາງສາມາດບັນຈຸ ແລະ ຫຸ້ມຫໍ່ອາຫານໄດ້;

9. ປະຢັດມັດທະຍັດ ໝາຍເຖິງ ການນຳໃຊ້ງົບປະມານ ແລະ ຊັບສິນຂອງບຸກຄົນ, ນິຕິບຸກຄົນ, ການ ຈັດຕັ້ງລັດ, ແຮງງານ, ເວລາລັດຖະການ, ພະລັງງານ ແລະ ອື່ນໆ ທີ່ມີຢູ່ຢ່າງຈຳກັດໃຫ້ມີປະສິດທິຜົນສູງສຸດ;

10. ຟຸມເຟືອຍ ໝາຍເຖິງ ການນຳໃຊ້ງົບປະມານ ແລະ ຊັບສິນຂອງບຸກຄົນ, ການຈັດຕັ້ງລັດ, ແຮງງານ, ເວລາທາງລັດຖະການ, ພະລັງງານອື່ນໆເກີນກຳນົດໝາຍ ແລະ ມາດຖານທີ່ໄດ້ການົດໄວ້ຢ່າງບໍ່ມີປະສິດທິຜົນ;

11. ເດຊິເບວ (Decibel) ໝາຍເຖິງ ຫົວໜ່ວຍວັດແທກຄວາມດັງຂອງສຽງ.

ມາດຕາ 4 ນະໂຍບາຍຂອງລັດຕໍ່ການຄຸ້ມຄອງງານແຕ່ງດອງ,ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ

ລັດຊຸກຍູ້, ສົ່ງເສີມໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ໃຫ້ເປັນເຈົ້າການໃນການ ຄຸ້ມຄອງການຈັດຕັ້ງງານແຕ່ງດອງ, ບາສີສູ່ຂວັນ, ງານລ້ຽງ ແລະ ບຸນປະເພນີຕ່າງໆ ໃຫ້ໄດ້ຄວາມໝາຍຄວາມ ສຳຄັນທາງດ້ານເນື້ອໃນ, ຈຸດປະສົງ ແລະ ເປົ້າໝາຍຂອງງານຢ່າງຄົບຖ້ວນ, ຖືກຕ້ອງ, ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ, ເຮັດແບບກະທັດຮັດບໍ່ໃຫຍ່ໂຕເກີນຄວນ ແລະ ບໍ່ຟຸມເຟືອຍທາງດ້ານຊັບສິນເງິນຄຳ, ວັດຖຸອຸປະກອນ, ແຮງງານ ແລະ ເວລາ.

ມາດຕາ 5 ຫຼັກການກ່ຽວກັບການຄຸ້ມຄອງການຈັດງານແຕ່ງດອງ, ບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ

ຫຼັກການກ່ຽວກັບການຄຸ້ມຄອງການຈັດງານແຕ່ງດອງ, ບາສີສູ່ຂັວນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆມີ:

1. ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ ແລະ ບັນດາເຜົ່າ;

2. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ມີການປະສານງານກັບບັນດາພາກສ່ວນກ່ຽວຂ້ອງ ແລະ ຕິດຕາມ ກວດກາໄດ້;

3. ຮັບປະກັນການປະຢັດມັດທະຍັດ, ຕ້ານການຟຸມເຟືອຍ;

4. ຮັບປະກັນຄວາມປອດໄພທາງດ້ານຊັບສິນ, ຊີວິດ, ສຸຂະພາບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ແລະ ສິ່ງແວດລ້ອມ;

5. ຮັບປະກັນຄວາມສາມັກຄີ, ຄວາມເປັນເອກະພາບ ແລະ ສະເໝີພາບ ຂອງປະຊາຊົນບັນດາເຜົ່າພາຍໃນ ແຂວງຫົວພັນ.

ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ບັນດາອົງການຈັດຕັ້ງລັດທຸກພາກສ່ວນທັງພາຍໃນ ແລະ ຕ່າງປະເທດ ທີ່ມີເປົ້າໝາຍຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ ຢູ່ ແຂວງຫົວພັນ.

ພາກທີ II

ການຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ

ໝວດທີ 1

ການຈັດງານແຕ່ງດອງ

ມາດຕາ 7 ພິທີການແຕ່ງດອງ

ພິທີການແຕ່ງດອງຕາມຮີດຄອງປະເພນີຈະຈັດກ່ອນ ຫຼື ຫຼັງການຈົດທະບຽນການແຕ່ງດອງກໍໄດ້ແຕ່ບໍ່ໃຫ້ ມີຜົນສະທ້ອນທາງດ້ານກົດໝາຍ;

ຄູ່ບ່າວສາວຈະມີຖານະເປັນຄູ່ຜົວເມຍກັນນັບແຕ່ວັນທີ່ໄດ້ຈົດທະບຽນການແຕ່ງດອງເປັນຕົ້ນໄປ.

ມາດຕາ 8 ການແຫ່ໃພ້ ແລະ ແຫ່ເຂີຍ

ການແຫ່ໃພ້ ແລະ ແຫ່ເຂີຍໃຫ້ຈັດແບບງ່າຍດາຍ, ກະທັດຮັດ, ມ່ວນຊື່ນຕາມປະເພນີ ແລະ ແຫ່ດ້ວຍການ ຍ່າງ ຫຼື ນຳໃຊ້ພາຫະນະຕາມຄວາມເໝາະສົມ ແຕ່ບໍ່ໃຫ້ສ້າງຄວາມຫຍຸ້ງຍາກ ແລະ ກີດຂວາງການສັນຈອນຕາມ ທ້ອງຖະໜົນ.

ມາດຕາ 9 ພິທີຜູກແຂນຄູ່ຜົວເມຍໃໝ່

ການຜູກແຂນຄູ່ຜົວເມຍໃໝ່ໃຫ້ປະຕິບັດຕາມຮີດຄອງປະເພນີຂອງບັນດາເຜົ່າທີ່ເຄີຍສືບທອດກັນມາ, ເຊິ່ງຈະຈັດຢູ່ເຮືອນເຈົ້າບ່າວ, ເຈົ້າສາວ ຫຼື ສະຖານທີ່ອື່ນໆກໍໄດ້ ຕາມຄວາມເໝາະສົມ, ອາດຈະຕົບແຕ່ງ ປະດັບປະດາເອ້ຍ້ອງດ້ວຍດອກໄມ້ ຫຼື ວັດຖຸອື່ນໆ ແລະ ມີພາເຂົ້າ, ພາຂວັນ, ຂັນໝາກເບັງ, ວັດຖຸສິ່ງຂອງທີ່ ເປັນສິລິມຸງຄຸນຕ່າງໆ ແລະ ມີໝໍພອນເພື່ອທຳພິທີໃຫ້ພອນແກ່ຄູ່ບ່າວສາວຕາມຮີດຄອງປະເພນີ.

ມາດຕາ 10 ສະຖານທີ່ ແລະ ພາເຂົ້າໃນງານແຕ່ງດອງ

ສະຖານທີ່ຈັດງານແຕ່ງດອງ ອາດຈະຈັດຂຶ້ນຢູ່ເຮືອນເຈົ້າບ່າວ, ເຈົ້າສາວ ຫຼື ສະຖານທີ່ອື່ນກໍໄດ້ ແລ້ວແຕ່ ຄວາມສະດວກຂອງເຈົ້າພາບ, ແຕ່ສະຖານທີ່ຕ້ອງໃຫ້ພຽງພໍໃນການຮັບຮອງແຂກທີ່ມາຮ່ວມງານດອງ ແລະ ບໍ່ໃຫ້ ແອອັດຈົນເກີນໄປ;

ພາເຂົ້າໃນງານແຕ່ງດອງ ອາດຈະຈັດເປັນພາເຂົ້າ ຫຼື ເປັນໂຕະອາຫານ(ໂຕະຍາວ, ໂຕະສີ່ຫຼ່ຽມ ໂຕະມົນ ຫຼື ຮູບແບບອື່ນໆ) ກໍໄດ້ຕາມຄວາມເໝາະສົມ; ສ່ວນອາຫານອາດຈະປະກອບມີຫຼາຍປະເພດ ຕາມຈຸດປະສົງຂອງ ເຈົ້າພາບ ແຕ່ຕ້ອງຮັບປະກັນໃຫ້ຖືກຕາມຫຼັກອານາໄມ, ປອດໄພຕໍ່ຊີວິດ, ສຸຂະພາບຂອງຜູ້ບໍລິໂພກ, ອາຫານອາດ ຈະຫຸ້ມຫໍ່ ຫຼື ບັນຈຸດ້ວຍວັດຖຸທຳມະຊາດ ຫຼື ວັດຖຸອື່ນໆ ທີ່ບໍ່ສົ່ງຜົນກະທົບຕໍ່ຜູ້ບໍລິໂພກ.

ມາດຕາ 11 ການຕ້ອນຮັບແຂກໃນງານແຕ່ງດອງ

ກ່ອນແຂກທີ່ຖືກເຊີນຈະເຂົ້າຮ່ວມໃນງານ ເຈົ້າພາບຕ້ອງໄດ້ກະກຽມສະຖານທີ່, ອາຫານ, ເຄື່ອງດື່ມ ແລະ

ສິ່ງອື່ນໆໃຫ້ຄົບຖ້ວນ ແລະ ຕ້ອນຮັບແຂກ, ຈັດແຂກເຂົ້າຮ່ວມພາເຂົ້າໃນງານດອງ ຕາມຄວາມເໝາະສົມ; ເມື່ອ ຮອດເວລາຕາມການນັດໝາຍ ຄູ່ບ່າວສາວ, ພໍ່ແມ່, ເຖົ້າແກ່ ແລະ ຕາງໜ້າເຈົ້າພາບທັງສອງຝ່າຍ ຂຶ້ນສູ່ເວທີເພື່ອ ກ່າວການຕ້ອນຮັບ, ຂອບໃຈແຂກທີ່ມາຮ່ວມງານແຕ່ງດອງ ແລະ ເຊີນຮັບປະທານອາຫານ;

ການກ່າວຕ້ອນຮັບແຂກນັ້ນຕ້ອງໃຫ້ມີເນື້ອໃນສັ້ນ, ກະທັດຮັດ, ເປັນສິລິມຸງຄຸນແກ່ຄູ່ສ້າງຄອບຄົວໃໝ່ ແລະ ແຂກທີ່ມາຮ່ວມໃນງານ.

ມາດຕາ 12 ການນຸ່ງຖືໃນງານແຕ່ງດອງ

ເຈົ້າພາບ, ເຈົ້າບ່າວ, ເຈົ້າສາວ ແລະ ແຂກຖືກເຊີນ ທີ່ມາຮ່ວມໃນງານແຕ່ງດອງ ຕ້ອງນຸ່ງຖືສຸພາບຮຽບ ຮ້ອຍ ຕາມວັດທະນະທຳຂອງລາວເຊັ່ນ: ເພດຍິງນຸ່ງສິ້ນ, ເສື້ອແພໄໝ ຫຼື ເສື້ອສຸພາບ ແລະ ເພດຊາດນຸ່ງໂສ້ງຂາ ຍາວ, ເສື້ອແພໄໝ, ເສື້ອສຸພາບ, ຊຸດສາກົນ ຫຼື ອາດຈະນຸ່ງຕາມເອກະລັກວັດທະນະທຳຂອງເຜົ່າກໍໄດ້.

ມາດຕາ 13 ການມ່ວນຊື່ນໃນງານແຕ່ງດອງ

ພາຍຫຼັງຮັບປະທານອາຫານແລ້ວ ໃນກໍລະນີຫາກມີການມ່ວນຊື່ນ ຕ້ອງໃຫ້ຖືກຕາມວັດທະນະທຳລາວ; ການຂັບ, ລຳ, ຮ້ອງເພງ, ເປີດເພງ ຕ້ອງເປັນບົດເພງ, ສຽງຂັບ, ສຽງລຳຂອງລາວ, ບັນດາເຜົ່າ ກວມ 70% ຂຶ້ນໄປ, ການມ່ວນຊື່ນ ແມ່ນບໍ່ໃຫ້ເກີນ 3 ຊົ່ວໂມງ ແລະ ບໍ່ໃຫ້ແກ່ຍາວເກີນເວລາ 22:30.

ໝວດທີ 2
ການຈັດງານບາສີສູ່ຂວັນ

ມາດຕາ 14 ພາຂ້ອນງານບາສີສູ່ຂວັນ

ເຈົ້າພາບຕ້ອງກະກຽມພາບາສີສູ່ຂວັນ ຕາມຄວາມເໝາະສົມ ໃນນັ້ນພາຂວັນອາດຈະປະກອບມີຂັນໝາກ ເບັ່ງ, ຂັນດອກໄມ້ ແລະ ເຄື່ອງປະກອບພິທີຕ່າງໆ ທີ່ເປັນສິລິມຸງຄຸນ ຕາມຮີດຄອງປະເພນີຂອງແຕ່ລະເຜົ່າ.

ມາດຕາ 15 ສະຖານທີ່ຈັດງານບາສີສູ່ຂວັນ

ສະຖານທີ່ຈັດງານບາສີສູ່ຂວັນ ອາດຈະຈັດຢູ່ໃນເຮືອນຂອງບຸກຄົນ ຫຼື ສະຖານທີ່ອື່ນຕາມຈຸດປະສົງຂອງ ຜູ້ຈັດງານບາສີສູ່ຂວັນ, ແຕ່ສະຖານທີ່ຕ້ອງໃຫ້ພຽງພໍໃນການຮັບຮອງແຂກທີ່ມາຮ່ວມງານບາສີສູ່ຂວັນ ແລະ ບໍ່ໃຫ້ ແອອັດເກີນໄປ.

ມາດຕາ 16 ໝໍພອນ

ໝໍພອນແມ່ນຜູ້ທີ່ມີຄວາມຮູ້ທາງດ້ານສາສະໜາ, ຮູ້ພິທີກຳ, ຮູ້ຄຳໃຫ້ພອນແກ່ງານຕ່າງໆ ເຊັ່ນ: ງານແຕ່ງ ດອງ, ຂຶ້ນເຮືອນໃໝ່, ງານປະເພນີ ແລະ ອື່ນໆ; ໝໍພອນຕ້ອງແຕ່ງກາຍສຸພາບຮຽບຮ້ອຍຕາມຄວາມເໝາະສົມ ຂອງແຕ່ລະງານ.

ມາດຕາ 17 ອາຫານ ແລະ ພາເຂົ້າໃນງານບາສີສູ່ຂວັນ

ອາຫານສາມາດປຸງແຕ່ງໄດ້ຫລາຍປະເພດຕາມຈຸດປະສົງຂອງຜູ້ຈັດງານ ແຕ່ຕ້ອງຮັບປະກັນຫຼັກອານາໄມ, ຄວາມປອດໄພຕໍ່ຊີວິດ, ສຸຂະພາບຂອງຜູ້ບໍລິໂພກ, ອາຫານອາດຈະຫຸ້ມຫໍ່ ຫຼື ບັນຈຸດ້ວຍວັດຖຸທຳມະຊາດ ຫຼື ວັດ ຖຸອື່ນທີ່ບໍ່ເປັນສານພິດ ແລະ ສິ່ງຜົນກະທົບຕໍ່ຜູ້ບໍລິໂພກ;

ພາເຂົ້າໃນງານບາສີສູ່ຂວັນ ອາດຈະຈັດເປັນພານເຂົ້າ ຫຼື ເປັນໂຕະອາຫານ(ໂຕະຍາວ, ໂຕະສີ່ຫຼຽມ ໂຕະມົນ ຫຼື ຮູບແບບອື່ນໆ) ກໍໄດ້ຕາມຄວາມເໝາະສົມຂອງຜູ້ຈັດງານບາສີສູ່ຂວັນຂຶ້ນ.

ມາດຕາ 18 ການນຸ່ງຖືໃນງານບາສີສູ່ຂວັນ

ເຈົ້າພາບ, ແຂກຖືກເຊີນ ມາຮ່ວມໃນງານບາສີສູ່ຂວັນ, ຄວນແຕ່ງການສຸພາບຮຽບຮ້ອຍຕາມວັດທະນະທຳຂອງລາວເຊັ່ນ: ເພດຍິງນຸ່ງສິ້ນ, ເສື້ອແພໄໝ ຫຼື ເສື້ອສຸພາບ ແລະ ເພດຊາດນຸ່ງໂສ້ງຂາຍາວ, ເສື້ອແພໄໝ, ເສື້ອສຸພາບ, ຊຸດສາກົນ ຫຼື ອາດຈະນຸ່ງຕາມເອກະລັກວັດທະນະທຳຂອງເຜົ່າກໍໄດ້.

ມາດຕາ 19 ການມ່ວນຊື່ນໃນງານບາສີສູ່ຂວັນ

ໃນການບາສີສູ່ຂວັນນັ້ນອາດຈະມີການມ່ວນຊື່ນ ຫຼື ບໍ່ມ່ວນຊື່ນກໍໄດ້ ໃນກໍລະນີມີການມ່ວນຊື່ນໃຫ້ປະຕິບັດຄືກັນກັບມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

ໝວດທີ 3
ການຈັດງານລ້ຽງ

ມາດຕາ 20 ສະຖານທີ່ຈັດງານລ້ຽງ

ງານລ້ຽງອາດຈະຈັດຢູ່ເຮືອນບຸກຄົນ, ນິຕິບຸກຄົນ, ສຳນັກງານອົງການ ຫຼື ຢູ່ຮ້ານອາຫານຕ່າງໆ ແລ້ວແຕ່ສະດວກຂອງເຈົ້າພາບຈັດງານ ແຕ່ສະຖານທີ່ຕ້ອງສະດວກ ແລະ ພຽງພໍໃນການຮັບຮອງແຂກທີ່ເຊີນມາຮ່ວມ;

ສະຖານທີ່ຈັດງານລ້ຽງອາດຈະມີການຕົບແຕ່ງປະດັບປະດາຕາມຈຸດປະສົງຂອງຜູ້ຈັດງານ ແຕ່ບໍ່ໃຫ້ຟຸມເຟືອຍເກີນໄປຈະເປັນການສິ້ນເປືອງງົບປະມານ.

ມາດຕາ 21 ອາຫານ ແລະ ພາເຂົ້າໃນງານລ້ຽງ

ອາຫານສາມາດປຸງແຕ່ງໄດ້ຫລາຍປະເພດຕາມຈຸດປະສົງຂອງຜູ້ຈັດງານ ແຕ່ຕ້ອງຮັບປະກັນຫຼັກອານາໄມ, ຄວາມປອດໄພຕໍ່ຊີວິດ, ສຸຂະພາບຂອງຜູ້ບໍລິໂພກ, ອາຫານອາດຈະຫຸ້ມຫໍ່ດ້ວຍວັດຖຸທຳມະຊາດ ຫຼື ວັດຖຸອື່ນທີ່ບໍ່ເປັນສານພິດ ແລະ ສິ່ງຜົນກະທົບຕໍ່ຜູ້ບໍລິໂພກ;

ໃນກໍລະນີເປັນງານລ້ຽງຕ້ອນຮັບແຂກຂັ້ນສູງ ຫຼື ແຂກຕ່າງປະເທດ ຄວນກຳນົດ ແລະ ປຸງແຕ່ງອາຫານໃຫ້ເໝາະສົມກັບງານ ແລະ ແຂກທີ່ເຂົ້າມາຮ່ວມ; ພາເຂົ້າໃນງານລ້ຽງອາດຈະຈັດເປັນພານເຂົ້າ ຫຼື ເປັນໂຕະອາຫານ(ໂຕະຍາວ, ໂຕະສີ່ຫຼຽມ ໂຕະມົນ ຫຼື ຮູບແບບອື່ນໆ) ຕາມຄວາມເໝາະສົມຂອງງານລ້ຽງ.

ມາດຕາ 22 ການນຸ່ງຖືໃນງານລ້ຽງ

ເຈົ້າພາບ, ແຂກຖືກເຊີນ ທີ່ມາຮ່ວມງານລ້ຽງ ຕ້ອງແຕ່ງກາຍໃຫ້ສຸພາບຮຽບຮ້ອຍຕາມວັດທະນະທຳການນຸ່ງຖືຂອງລາວເຊັ່ນ: ເພດຍິງ ນຸ່ງສິ້ນ, ເສື້ອແພໄໝ ຫຼື ເສື້ອສຸພາບ ແລະ ເພດຊາດນຸ່ງໂສ້ງຂາຍາວ, ເສື້ອແພໄໝ, ເສື້ອສຸພາບ, ຊຸດສາກົນ ຫຼື ອາດຈະນຸ່ງຕາມເອກະລັກວັດທະນະທຳຂອງເຜົ່າກໍໄດ້ ແລະ ນຸ່ງຖືຕາມການກຳນົດຂອງຜູ້ຈັດງານ.

ມາດຕາ 23 ການມ່ວນຊື່ນໃນງານລ້ຽງ

ໃນງານລ້ຽງ ອາດຈະມີການມ່ວນຊື່ນ ຫຼື ບໍ່ມ່ວນຊື່ນກໍໄດ້ ໃນກໍລະນີຫາກມີການມ່ວນຊື່ນ ຕ້ອງໃຫ້ຖືກ

ຕ້ອງຕາມວັດທະນະທຳລາວ ການຂັບ, ລຳ, ຮ້ອງເພງ, ເປີດເພງ ຕ້ອງເປັນບົດເພງ, ສຽງຂັບ, ສຽງລຳຂອງລາວ, ບັນດາເຜົ່າກວມ 70% ຂຶ້ນໄປ, ໃນການມ່ວນຊື່ນໃນງານລ້ຽງ ແມ່ນບໍ່ໃຫ້ເກີນ 2 ຊົ່ວໂມງ ແລະ ບໍ່ໃຫ້ແກ່ຍາວເກີນເວລາ 22:00;

ໃນກໍລະນີເປັນງານລ້ຽງຕ້ອນຮັບແຂກຕ່າງປະເທດການມ່ວນຊື່ນຮ້ອງເພງ, ເປີດເພງ ຂອງຕ່າງປະເທດແມ່ນບໍ່ໃຫ້ເກີນ 50% ຂອງເພງລາວ.

ໝວດທີ 4
ບຸນປະເພນີຕ່າງໆ

ມາດຕາ 24 ການກະກຽມ ແລະ ສະຖານທີ່ຈັດງານບຸນປະເພນີ

ການກະກຽມງານບຸນປະເພນີຕ່າງໆ ອົງການປົກຄອງແຕ່ລະຂັ້ນ, ປະຊາຊົນບັນດາເຜົ່າພາຍໃນແຂວງ, ເມືອງ, ບ້ານ ຕ້ອງມີຄວາມເປັນເອກະພາບກັນ ແລະ ຕ້ອງມີການແຕ່ງຕັ້ງຄະນະຮັບຜິດຊອບ, ປະສານສົມທົບຢ່າງກົມກຽວກັບບັນດາອົງການກ່ຽວຂ້ອງຢ່າງຄັກແນ່;

ໃນກໍລະນີເປັນການຈັດງານບຸນປະເພນີຂອງບຸກຄົນ, ຄອບຄົວ ຜູ້ຈັດງານບຸນປະເພນີນັ້ນຕ້ອງໄດ້ກະ ກຽມຄວາມພ້ອມໃນດ້ານຕ່າງໆໃຫ້ຄົບຖ້ວນ, ຖືກຕ້ອງຕາມປະເພນີ ແລະ ຕ້ອງແຈ້ງໃຫ້ອົງການປົກຄອງ ຫຼື ພາກສ່ວນກ່ຽວຂ້ອງຮັບຮູ້;

ການຈັດບຸນປະເພນີຕ່າງໆ ອາດຈະຈັດຢູ່ສະຖານທີ່ເຮືອນ, ວັດ, ສຳນັກງານອົງການ ແລະ ສະຖານທີ່ອື່ນໆ ກໍໄດ້ ຕາມສະດວກ ແລະ ເໝາະສົມຂອງຜູ້ຈັດງານ.

ມາດຕາ 25 ອາຫານ ແລະ ພາເຂົ້າງານບຸນປະເພນີ

ອາຫານໃນງານບຸນປະເພນີຕ່າງໆ ສາມາດປຸງແຕ່ງໄດ້ຫລາຍປະເພດ, ຕາມຮີດຄອງ ແລະ ຕາມຈຸດປະສົງຂອງຜູ້ຈັດງານ ແຕ່ຕ້ອງຮັບປະກັນຫຼັກອານາໄມ, ປອດໄພຕໍ່ຊີວິດ, ສຸຂະພາບຂອງຜູ້ບໍລິໂພກ ອາຫານອາດຈະຫຸ້ມຫໍ່ ຫຼື ບັນຈຸດ້ວຍວັດຖຸທຳມະຊາດ ຫຼື ວັດຖຸອື່ນທີ່ບໍ່ເປັນສານພິດສິ່ງພົນກະທົບຕໍ່ຜູ້ບໍລິໂພກ;

ການຈັດພາເຂົ້າໃນງານບຸນປະເພນີຕ່າງໆ ສາມາດຈັດເປັນພານເຂົ້າ ຫຼື ເປັນໂຕະອາຫານ(ໂຕະຍາວ, ໂຕະສີ່ຫຽມ ໂຕະມົນ ຫຼື ຮູບແບບອື່ນໆ) ຕາມຄວາມເໝາະສົມຂອງງານບຸນດັ່ງກ່າວ.

ມາດຕາ 26 ການນຸ່ງຖືໃນງານບຸນປະເພນີ

ເຈົ້າພາບ, ແຂກຖືກເຊີນ ມາຮ່ວມໃນງານບຸນປະເພນີຕ່າງໆ ຕ້ອງແຕ່ງກາຍໃຫ້ສຸພາບຮຽບຮ້ອຍຕາມວັດທະນະທຳການນຸ່ງຖືຂອງລາວ ເຊັ່ນ: ເພດຍິງ ນຸ່ງສິ້ນ, ເສື້ອແພໄໝ ຫຼື ເສື້ອສຸພາບ ແລະ ເພດຊາຍນຸ່ງໂສ້ງຂາຍາວ, ເສື້ອແພໄໝ, ເສື້ອສຸພາບ, ຊຸດສາກົນ ຫຼື ອາດຈະນຸ່ງຕາມເອກະລັກວັດທະນະທຳຂອງເຜົ່າກໍໄດ້.

ມາດຕາ 27 ການມ່ວນຊື່ນໃນບຸນປະເພນີ

ການຈັດງານບຸນປະເພນີຕ່າງໆ ຕ້ອງໃຫ້ຖືກຕ້ອງຕາມວັດທະນະທຳລາວ ການຂັບ, ລຳ, ຮ້ອງເພງ, ເປີດເພງ ຕ້ອງເປັນບົດເພງ, ສຽງຂັບ, ສຽງລຳຂອງລາວ, ບັນດາເຜົ່າ 100%, ໃນການມ່ວນຊື່ນໃນງານບຸນປະເພນີ ແມ່ນໃຫ້ຢູ່ໃນລະດັບທີ່ເໝາະສົມຂອງແຕ່ລະບຸນງານ.

ພາກທີ III
ຂໍ້ຫ້າມ

ມາດຕາ 28 ຂໍ້ຫ້າມທົ່ວໄປ

ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນໃນການຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ ມີດັ່ງນີ້:

1. ຈັດຕັ້ງງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆຂຶ້ນ ທີ່ມີຈຸດປະສົງເປັນການຫາລາຍໄດ້, ອວດອ້າງຖານະຕຳແໜ່ງ ແລະ ອິດທິພົນທາງສັງຄົມ;

2. ຈັດຕັ້ງງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ ທີ່ໃຫຍ່ໂຕເກີນຂອບເຂດ, ແກ່ຍາວເວລາ ເປັນການຟຸມເຟືອຍ ແລະ ສ້າງຄວາມສັບສົນແກ່ຜູ້ອື່ນ;

3. ນຳໃຊ້ຖະໜົນຫົນທາງ ເພື່ອເປັນສະຖານທີ່ຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆຂຶ້ນ ໃນກໍລະນີຈຳເປັນຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງຢ່າງຄົບຖ້ວນ;

4. ບໍ່ໃຫ້ໝໍພອນໃຫ້ພອນສິ່ງທີ່ບໍ່ເປັນສິລິມຸງຄຸນແກ່ເຈົ້າພາບ, ແຂກ ແລະ ເອີ້ນເອົາຄ່າຂັນທຽນໃນງານຕ່າງໆ ນຳເຈົ້າພາບຫຼາຍເກີນຂອບເຂດ;

5. ນຳໃຊ້ວັດຖຸອຸປະກອນທີ່ສິ່ງຜົນກະທົບຕໍ່ຊີວິດ, ສຸຂະພາບຂອງຜູ້ບໍລິໂພກ ມາປຸງແຕ່ງອາຫານ ແລະ ບັນຈຸຫຸ້ມຫໍ່ອາຫານເຊັ່ນ: ຟອງສະໂນ, ປະເພດ Plastic(ປາສະຕິກ) ແລະ ອື່ນໆ;

6. ບຸກຄົນ, ນິຕິບຸກຄົນ ແລະ ບັນດາອົງການຈັດຕັ້ງທຸກພາກສ່ວນພາຍໃນເຂດທົ່ວພັນຂັບລຳ, ຮ້ອງເພງ, ເປີດເພງທີ່ມີເນື້ອຫາບໍ່ສຸພາບ, ເຢາະເຢີ້ຍສຽດສີ ແລະ ໂຄສະນາປິດເບືອນທີ່ບໍ່ສອດຄ່ອງກັບເນວທາງ, ລະບຽບກົດໝາຍຂອງພັກ-ລັດ ຢູ່ຕາມສະຖານທີ່ງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ;

7. ເສບຕິນຕີ, ຮ້ອງເພງ, ເປີດເພງໃນງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ ທີ່ມີສຽງດັງເກີນກວ່າ 85 Decibel (ເດຊິເບວ);

8. ການມ່ວນຊື່ນຢູ່ໃນງານຕ່າງໆ ແມ່ນໃຫ້ປະຕິບັດຕາມມາດຕາ 13, 23 ແລະ ມາດຕາ 27 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 29 ຂໍ້ຫ້າມສຳລັບຜູ້ຈັດງານ

ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ, ຜູ້ຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ບຸນປະເພນີຕ່າງໆ ມີດັ່ງນີ້:

1. ຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆຂຶ້ນ ທີ່ມີລັກສະນະຫາລາຍໄດ້ໂດຍການອອກບັດເຊີນເປັນຈຳນວນຫຼາຍເກີນຂອບເຂດ, ເກີນສະຖານທີ່, ໂຕະ, ຕັ່ງ, ອາຫານ, ເຄື່ອງດື່ມທີ່ຮັບຮອງໄດ້, ການອອກບັດເຊີນງານດອງ ແມ່ນບໍ່ໃຫ້ເກີນ 600 ບັດ;

2. ຮຽກຄ່າດອງ, ຄ່າສິນສອດ, ຄ່າໝັ້ນສິນຍືນເປັນຈຳນວນຫຼວງຫຼາຍເກີນຂອບເຂດ ຫຼື ເກີນຄວາມສາມາດຂອງຜູ້ຈ່າຍ; ຄ່າເງິນຮີດຄອງ(ເງິນອ້າຍ,ເງິນນ້ອງ) ບໍ່ໃຫ້ເກີນ 5 ລ້ານກີບ; ຄ່າສິນສອດ, ຄ່າໝັ້ນສິນຍືນ ບໍ່ໃຫ້ເກີນຄຳ 2 ບາດ ຫຼື ຖ້າເປັນເງິນສົດທົດແທນແມ່ນບໍ່ໃຫ້ເກີນ 10 ລ້ານກີບ;

3. ແຫ່ໃພ້ ແຫ່ເຂີຍທີ່ໃຫຍ່ໂຕ, ມີລັກສະນະອວດອ້າງຖານະ, ຕຳແໜ່ງ ແລະ ນຳໃຊ້ພາຫະນະສ່ວນຕົວ, ຂອງລັດ ແຫ່ໄປຕາມຖະໜົນຫົນທາງເປັນຈຳນວນຫຼວງຫຼາຍ ທີ່ເປັນການກີດຂວາງການສັນຈອນ ຫຼື ນຳໃຊ້ພາຫະນະທີ່ບໍ່ເໝາະສົມເຂົ້າໃນຂະບວນແຫ່ ເຊັ່ນ: ນຳໃຊ້ລົດຈັກ, ລົດດ້ຳມ ແລະ ອື່ນໆ;

4. ເຍັ້ນເຫຼົ້າ, ເບຍ ຫຼື ເຄື່ອງດື່ມຕ່າງໆ ອວຍພອນແຂກໃນງານຕ່າງໆ ໂດຍນຳໃຊ້ຈອກດຽວຮ່ວມກັນຫຼາຍຄົນ ຫຼື ທັກທາຍດ້ວຍການຈັບມື, ກອດແຂນ, ກອດຄໍກັນ ໃນເວລາຮັບປະທານອາຫານ ແລະ ກະທຳສິ່ງອື່ນໆທີ່ບໍ່ສຸພາບພາຍໃນງານ;

5. ເຈົ້າບ່າວ, ເຈົ້າສາວ ໂຍນຊໍ່ດອກໄມ້ໃຫ້ແກ່ແຂກທີ່ມາຮ່ວມໃນງານແຕ່ງດອງ ທີ່ບໍ່ຖືກຕ້ອງຕາມຮີດຄອງປະເພນີອັນດີງາມຂອງລາວ.

ມາດຕາ 30 ຂໍ້ຫ້າມສຳຫຼັບແຂກທີ່ມາຮ່ວມງານ

ຂໍ້ຫ້າມສຳລັບແຂກທີ່ເຂົ້າຮ່ວມໃນງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆມີດັ່ງນີ້:

1. ນຸ່ງຖືບໍ່ສຸພາບ, ບໍ່ເໝາະສົມ, ບໍ່ຖືກຕ້ອງຕາມອັດທະນະທຳທຳຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ(ຍົກເວັ້ນກໍລະນີແຂກຕ່າງປະເທດ);

2. ແຕ່ງຕົວປະດັບເອ້ຢ້ອງ ດ້ວຍວັດຖຸມີຄ່າເກີນຂອບເຂດ ທີ່ເປັນການອວດອ້າງຖານະ, ຕຳແໜ່ງ ແລະ ຄວາມຮັ່ງມີຂອງຕົນເອງໃນງານຕ່າງໆ;

3. ນຳອາວຸດ, ວັດຖຸມີຄົມ, ສິ່ງເສບຕິດ, ສານເຄມີຕ່າງໆ ທີ່ເປັນອັນຕະລາຍ ແລະ ສິ່ງຜົນກະທົບຕໍ່ບຸກຄົນອື່ນເຂົ້າໃນງານຕ່າງໆ;

4. ດື່ມສິ່ງມຶນເມົາແລ້ວກໍ່ກວນອາລະວາດ, ຜິດຖຽງກັນ, ທຳຮ້າຍຮ່າງກາຍ(ຕີກັນ) ແລະ ກະທຳສິ່ງຕ່າງໆ ທີ່ເປັນການສ້າງຄວາມບໍ່ສະຫງົບໃນງານປະເພດຕ່າງໆ;

5. ປະພຶດສິ່ງທີ່ລາມົກອານາຈານ ແລະ ກະທຳສິ່ງຕ່າງໆແບບບໍ່ເໝາະສົມຢູ່ໃນງານຕ່າງໆ;

6. ບໍ່ໃຫ້ຜູ້ປົກຄອງປະປ່ອຍລູກຫຼານຕົນເອງ ເຂົ້າໄປລົບກວນສະຖານທີ່ໜ້າເວທີຈັດງານຕ່າງໆ.

ພາກທີ IV
ການຄຸ້ມຄອງ ແລະ ກວດກາການຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ

ໝວດທີ 1
ການຄຸ້ມຄອງງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ

ມາດຕາ31 ຄວາມຮັບຜິດຊອບໃນການຄຸ້ມຄອງການຈັດງານແຕ່ງດອງ, ບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນໃນທົ່ວແຂວງ ທີ່ຈັດງານໃດໜຶ່ງຂຶ້ນຕ້ອງມີຜູ້ຮັບຜິດຊອບໃນການຕິດຕາມກວດກາ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງງານທີ່ຈັດຂຶ້ນ ພ້ອມທັງຕິດຕາມກວດກາ ການຈັດງານແຕ່ລະປະເພດໂດຍສະເພາະແມ່ນ ຮູບແບບ, ວິທີຈັດງານ, ການປຸງແຕ່ງອາຫານ, ການບັນຈຸຫຸ້ມຫໍ່ ແລະ ອື່ນໆ.

ມາດຕາ 32 ອົງການຄຸ້ມຄອງງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ

ລັດເປັນຜູ້ຄຸ້ມຄອງການຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວແຂວງຫົວພັນ ໂດຍມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນໃຈກາງປະສານສົມທົບປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ.

ອົງການຄຸ້ມຄອງການຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆປະກອບດ້ວຍ:

1. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ແລະ ເມືອງ;
2. ພະແນກພາຍໃນແຂວງ ແລະ ເມືອງ;
3. ອົງການແນວລາວສ້າງຊາດແຂວງ ແລະ ເມືອງ;
4. ພະແນກສາທາລະນະສຸກແຂວງ ແລະ ເມືອງ;
5. ປກຊ-ປກສແຂວງ ແລະ ເມືອງ;
6. ອົງການປົກຄອງທ້ອງຖິ່ນ.

ມາດຕາ 33 ສິດ ແລະ ໜ້າທີ່ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ແລະ ເມືອງ

ສິດ, ໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ແລະ ເມືອງມີດັ່ງນີ້:

1. ເປັນເຈົ້າການໂຄສະນາ, ເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ບັນດາພໍ່ແມ່ປະຊາຊົນ, ການຈັດຕັ້ງທຸກພາກສ່ວນພາຍໃນແຂວງຫົວພັນຮັບຮູ້ຢ່າງທົ່ວເຖິງ;
2. ຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນພາຍໃນແຂວງທີ່ຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ;
3. ສຶກສາອົບຮົມ ແລະ ກ່າວເຕືອນບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນທີ່ມີການລະເມີດບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້;
4. ສົມທົບກັບຜູ້ຈັດງານປະເພດຕ່າງໆ, ອົງການກວດກາພາຍໃນ, ພາຍນອກ ແກ້ໄຂໃນກໍລະນີເກີດມີບັນຫາໃດບັນຫາໜຶ່ງເກີດຂຶ້ນໃຫ້ທັນເວລາ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 34 ສິດ ແລະ ໜ້າທີ່ ຂອງພະແນກພາຍໃນແຂວງ ແລະ ເມືອງ

ສິດ ແລະ ໜ້າທີ່ຂອງພະແນກພາຍໃນແຂວງ ແລະ ເມືອງ ມີດັ່ງນີ້:

1. ຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນພາຍໃນແຂວງໃນການຈັດຕັ້ງປະຕິບັດບຸນປະເພນີຕ່າງໆ;
2. ຄົ້ນຄ້ວາ, ມີຄຳເຫັນຕໍ່ການສະເໜີຈັດບຸນປະເພນີຕ່າງໆຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
3. ປະສານສົມທົບກັບຂະແໜງການຕ່າງໆໃນການຈັດງານບຸນປະເພນີ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 35 ສິດ ແລະ ໜ້າທີ່ຂອງພະແນກສາທາລະນະສຸກແຂວງ ແລະ ເມືອງ

ສິດ ແລະ ໜ້າທີ່ຂອງພະແນກສາທາລະນະສຸກແຂວງ ແລະ ເມືອງ ມີດັ່ງນີ້:

1. ເປັນເຈົ້າການໃນການຄົ້ນຄ້ວາ, ກຳນົດນະໂຍບາຍ, ແຜນຍຸດທະສາດ ແລະ ແຜນການຄຸ້ມຄອງຄວາມປອດໄພທາງດ້ານອາຫານໃນແຕ່ລະໄລຍະ;

2. ພົວພັນ, ປະສານສົມທົບ ແລະ ໃຫ້ຄຳປຶກສາແກ່ບັນດາຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ຕ່າງໆພາຍໃນແຂວງ ກ່ຽວກັບວຽກງານສຸຂະສຶກສາດ້ານອາຫານ ແລະ ເຄື່ອງດື່ມ;

3. ຄຸ້ມຄອງ, ຕິດຕາມກວດກາ ຄຸນນະພາບຄວາມປອດໄພຂອງອາຫານ, ເຄື່ອງດື່ມ ໃນງານແຕ່ງດອງ, ບາສີ ສູ່ຂໍ້ວນ, ງານລ້ຽງ ແລະ ບຸນປະເພນີຕ່າງໆ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 36 ສິດ ແລະ ໜ້າທີ່ຂອງອົງການແນວລາວສ້າງຊາດແຂວງ ແລະ ເມືອງ

ສິດ ແລະ ໜ້າທີ່ຂອງອົງການແນວລາວສ້າງຊາດແຂວງ ແລະ ເມືອງ ມີດັ່ງນີ້:

1. ເສີມຂະຫຍາຍສິດເປັນເຈົ້າ, ປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າ ແລະ ຊົນຄົນຕ່າງໆ;

2. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າໃນການ ປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດສັງຄົມຂອງຊາດ ໃນແຕ່ລະໄລຍະ;

3. ເກັບກຳຄຳຄິດ, ຄຳເຫັນ, ຄຳສະເໜີ ຂອງປະຊາຊົນລາວບັນດາເຜົ່າ, ຊົນຄົນ, ສາສະໜາ, ເພດໄວເພື່ອ ສະເໜີຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 37 ສິດ ແລະ ໜ້າທີ່ຂອງ ປກຊ-ປກສແຂວງ ແລະ ເມືອງ

ສິດ ແລະ ໜ້າທີ່ຂອງ ປກຊ-ປກສແຂວງ ແລະ ເມືອງ ມີດັ່ງນີ້:

1. ປົກປັກຮັກສາຄວາມສະຫງົບທາງດ້ານການເມືອງ, ເສດຖະກິດ-ສັງຄົມ;

2. ຊີ້ນຳ, ຄຸ້ມຄອງ, ກວດກາ ແລະ ຈັດຕັ້ງວຽກງານປ້ອງກັນຄວາມສະຫງົບໃນທົ່ວສັງຄົມ;

3. ສຶກສາອົບຮົມພໍ່ແມ່ປະຊາຊົນບັນດາເຜົ່າ ໃຫ້ເຊື່ອມຊຶມແນວທາງປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບທົ່ວປວງຊົນ, ເຄົາລົບ ແລະ ປະຕິບັດກົດລະບຽບຂອງບ້ານເມືອງຢ່າງເຂັ້ມງວດ;

4. ຈັດຕັ້ງກຳລັງອອກເຄື່ອນໄຫວ, ກວດກາລາດຕະເວນ, ຮັກສາຄວາມສະຫງົບ ແລະ ຄວາມເປັນລະ ບຽບຮຽບຮ້ອຍຂອງສັງຄົມ ແລະ ຕາມບຸນງານເທດສະການຕ່າງໆ;

5. ປະສານສົມທົບກັບພາກສ່ວນຕ່າງໆ ກ່ຽວກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

6. ຈັດຕັ້ງປະຕິບັດມະຕິຄຳສັ່ງ, ແຜນການ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງວາງອອກ ຢ່າງເຂັ້ມງວດ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 38 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ

ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ ມີດັ່ງນີ້:

1. ໂຄສະນາ, ເຜີຍແຜ່ຂໍ້ຕົກລົງສະບັບນີ້ໃຫ້ບັນດາພໍ່ແມ່ປະຊາຊົນພາຍໃນບ້ານໃຫ້ຮັບຮູ້ຢ່າງທົ່ວເຖິງ;

2. ຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາຄອບຄົວພາຍໃນບ້ານຂອງຕົນທີ່ຈັດງານແຕ່ງ ດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ;

3. ຊຸກຍູ້ບັນດາຄອບຄົວພາຍໃນບ້ານຂອງຕົນ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;

4. ສຶກສາອົບຮົມ ແລະ ກ່າວເຕືອນບຸກຄົນ, ນິຕິບຸກຄົນ ທີ່ລະເມີດບໍ່ປະຕິບັດຕາມຂໍ້ລົງສະບັບນີ້;

5. ສົມທົບ, ປະສານງານກັບຫ້ອງການທະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ ແລະ ພາກສ່ວນກ່ຽວຂ້ອງຕ່າງໆແກ້ໄຂບັນຫາໃນກໍລະນີເກີດບັນຫາຂຶ້ນ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ໝວດທີ 2
ອົງການກວດກາງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ

ມາດຕາ 39 ອົງການກວດກາພາຍໃນ

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງການຈັດງານແຕ່ງດອງ, ງານບາສີສູ່ຂວັນ, ງານລ້ຽງ ແລະ ງານບຸນປະເພນີຕ່າງໆ ຢູ່ແຂວງຫົວພັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 40 ອົງການກວດກາພາຍນອກ

ອົງການກວດກາພາຍນອກປະກອບມີສະພາປະຊາຊົນແຂວງ, ພະແນກກວດກາລັດ, ອົງການກວດສອບ ແລະ ອົງການໄອຍະການປະຊາຊົນແຂວງ.

ພາກທີ V
ການຍ້ອງຍໍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 41 ການຍ້ອງຍໍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນທີ່ມີຜົນງານດີເດັ່ນໃນການປະກອບສ່ວນ ແລະ ເປັນແບບຢ່າງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍຊົມເຊີຍຕາມລະບຽບການຢ່າງເໝາະສົມ.

ມາດຕາ 42 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ບັນດາອົງການຈັດຕັ້ງທຸກພາກສ່ວນໃດຫາກລະເມີດຕໍ່ຂໍ້ຕົກລົງສະບັບນີ້ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ ແລະ ລົງໂທດຕາມລັກສະນະຄວາມຜິດຢ່າງເໝາະສົມ.

ພາກທີ VI
ບົດບັນຍັດສຸດທ້າຍ

ມາດຕາ 43 ການຈັດຕັ້ງປະຕິບັດ

ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ອົງການປົກຄອງບ້ານ ເປັນໃຈກາງໃນການຈັດຕັ້ງຜັນຂະຫຍາຍ, ເຜີຍແຜ່ຂໍ້ຕົກລົງສະບັບນີ້ຕາມຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ ແລະ ເຮັດໜ້າທີ່ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ,

ຖອດຖອນບົດຮຽນ ກ່ຽວກັບເນື້ອໃນຂອງຂໍ້ຕົກລົງສະບັບນີ້ ໂດຍຖືວ່າເປັນມາດຕະຖານໜຶ່ງໃນການສ້າງຄົນ, ຄອບຄົວ, ບ້ານ ແລະ ກົມກອງວັດທະນະທຳ;

ຄອບຄົວ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ້ອງເປັນແບບຢ່າງໃນການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 44 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ 15 ວັນ ເປັນຕົ້ນໄປ.

ເຈົ້າແຂວງຫົວພັນ

ວັນໄຊ ແພງຊຸມມາ
Vanxay PHENGSOUMMA